**ມິຊຊາອາທິດທີ 31 ກຳນົດທຳມະດາປີ C**

**ວັນທີ 3 ພະຈິກ 2019**



**ພຣະວໍລະສານໂດຍນັກບຸນລູກາ 19, 1-10**

ໃນເວລານັ້ນ, ພຣະເຢຊູເຈົ້າສະເດັດເຂົ້າເມືອງເຢຣິໂກ. ພໍດີມີຄົນຜູ້ໜຶ່ງຊື່ຊາເກວ ເປັນຫົວໜ້າພວກເກັບສ່ວຍ, ເປັນຄົນຮັ່ງມີຫລາຍ. ຊາເກວຢາກເຫັນພຣະເຢຊູເຈົ້າວ່າເປັນຄົນແນວໃດ ແຕ່ບໍ່ສົມຫວັງຍ້ອນຄົນຫລາຍແລະເຂົາເອງກໍເປັນຄົນເຕັ້ຍ. ເຂົາຈຶ່ງແລ່ນໄປຂຶ້ນເທິງກົກເດື່ອຄອຍເບິ່ງຍ້ອນພຣະອົງຈະສະເດັດມາທາງນັ້ນ.

ເມື່ອພຣະເຢຊູເຈົ້າສະເດັດມາເຖິງທີ່ນັ້ນ, ພຣະອົງຊົງເງີຍພຣະພັກທອດພຣະເນດເຫັນຊາເກວຈຶ່ງກ່າວວ່າ: ຊາເກວ, ລົງມາໄວໆ, ມື້ນີ້ເອງ, ເຮົາຈະຕ້ອງໄປພັກເຊົາເຮືອນເຈົ້າ. ຊາເກວກໍຮີບລົງມາຈາກກົກໄມ້ແລະຕ້ອນຮັບພຣະອົງດ້ວຍຄວາມຊື່ນຊົມຍິນດີ.

ເມື່ອເຫັນດັ່ງນັ້ນ, ຄົນທັງຫລາຍກໍຈົ່ມວ່າ: ທ່ານຜູ້ນີ້ໄປພັກເຊົາຢູ່ກັບຄົນບາບ. ສ່ວນຊາເກວກໍລຸກຂຶ້ນທູນພຣະອົງເຈົ້າວ່າ: ບັດນີ້ຂ້າພະເຈົ້າຂໍຍົກຊັບສົມບັດຂອງຂ້າພະເຈົ້າເຄິ່ງໜຶ່ງໃຫ້ທານແກ່ຄົນທຸກຈົນ. ແລະຖ້າຂ້າພະເຈົ້າໄດ້ລັກໂລບເອົາຂອງຜູ້ໃດ, ຂ້າພະເຈົ້າຂໍໃຊ້ແທນສີ່ເທົ່າ.

ພຣະເຢຊູເຈົ້າກ່າວວ່າ: ວັນນີ້ຄວາມຣອດໄດ້ເຂົ້າມາສູ່ເຮືອນຫລັງນີ້ແລ້ວ, ດ້ວຍວ່າຜູ້ນີ້ກໍເປັນລູກຂອງອາບຣາຮາມດ້ວຍ. ດ້ວຍວ່າ, ບຸດມະນຸດສະເດັດມາຊອກຫາແລະຊ່ວຍຜູ້ທີ່ເສຍໄປແລ້ວໃຫ້ຣອດ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ລກ 19, 1-10**

ອາທິດທີ່ຜ່ານມາ, ວາຈາພຣະເຈົ້າໂດຍນັກບຸນລູກາໄດ້ກ່າວເຖິງຟາຣີເຊວແລະຄົນເກັບສ່ວຍທີ່ພາວະນາໃນພຣະວິຫານ. ແຕ່ຄົນເກັບສ່ວຍໄດ້ຄືນດີກັບພຣະເຈົ້າໃນຄຳພາວະນາຂອງເຂົາ, ສ່ວນຄົນຟາຣີເຊວນັ້ນບໍ່ເລີຍ. ຍ້ອນຄົນເກັບສ່ວຍນີ້ໄດ້ສຳນຶກເຖິງຊີວິດ, ການກະທຳບໍ່ດີຂອງເຂົາແລະວອນຂໍຄວາມເມດຕາ, ການໃຫ້ອະໄພຈາກພຣະເຈົ້າ.

ວັນນີ້, ນັກບຸນລູກາກໍໄດ້ກ່າວເຖິງຫົວໜ້າຄົນເກັບສ່ວຍຜູ້ໜຶ່ງທີ່ຮັ່ງມີ, ຊື່ຊາເກວຢູ່ເມືອງເຢຣີໂກ. ແລະກໍຢູ່ທາງເຂົ້າເມືອງເຢຣີໂກນີ້ເອງ, ກ່ອນທີ່ຈະພົບກັບຊາເກວ, ພຣະເຢຊູເຈົ້າໄດ້ປິ່ນປົວຄົນຕາບອດຜູ້ໜຶ່ງໃຫ້ເຫັນຮຸ່ງຍ້ອນຄວາມເຊື່ອຂອງເຂົາ. ເມື່ອຄົນຕາບອດນີ້ເຫັນຮຸ່ງແລ້ວເຂົາກໍເດີນຕາມພຣະເຢຊູພ້ອມທັງສັນລະເສີນພຣະເຈົ້າ.

ຊາເກວວັນນີ້ກໍມີຄວາມປາດຖະໜາຢາກເຫັນພຣະເຢຊູເຈົ້າ. ເຂົາອາດບໍ່ໄດ້ຕາບອດທາງຮ່າງກາຍແຕ່ເຂົາອາດຕາບອດໃນຄວາມຄິດ, ໃນຈິດໃຈ, ໃນການກະທຳທີ່ບໍ່ຖືກຕ້ອງ, ບໍ່ຍຸດຕິທຳຕໍ່ຄົນອື່ນ, ຍ້ອນເຂົາເປັນຫົວໜ້າຄົນເກັບສ່ວຍ. ສິ່ງທີ່ເຂົາປາດຖະໜາວັນນີ້ອາດຈະແມ່ນພົບກັບຄົນທີ່ສາມາດຊ່ວຍເຂົາໃຫ້ອອກຈາກຄວາມມືດແຫ່ງການຫລົງຜິດ, ແຫ່ງການບາບເພື່ອກັບມາສູ່ເສັ້ນທາງແຫ່ງຄວາມຖືກຕ້ອງ, ແຫ່ງຄວາມສະຫວ່າງ. ດ້ວຍເຫດນີ້, ຊາເກວຈຶ່ງຊອກຫາທຸກວິທີເພື່ອຢາກເຫັນພຣະເຢຊູເຈົ້າ. ແຕ່ກ່ອນທີ່ຊາເກວເຫັນພຣະເຢຊູເຈົ້າ, ພຣະອົງໄດ້ເຫັນເຂົາກ່ອນ. ພຣະອົງຢາກໄປພັກເຊົາຢູ່ເຮືອນເຂົາ. ຊາເກວບໍ່ພຽງແຕ່ຕ້ອນຮັບພຣະເຢຊູເຈົ້າເຂົ້າໃນເຮືອນຂອງເຂົາດ້ວຍຄວາມຊື່ນຍິນດີເທົ່ານັ້ນ ແຕ່ເຂົາຍັງຕ້ອນຮັບພຣະເຢຊູເຈົ້າເຂົ້າໃນດວງໃຈ, ໃນຊີວິດຂອງເຂົາອີກດ້ວຍ. ເມື່ອຊາເກວພົບກັບພຣະເຢຊູເຈົ້າແລ້ວ, ຊີວິດຂອງເຂົາກໍຜັນປ່ຽນໄປທັນທີ. ແຕ່ກ່ອນເຂົາອາດສໍ້ໂກງເງິນຄຳຊັບສິນຂອງຄົນທຸກຈົນ, ດຽວນີ້ເຂົາຍົກຊັບສິນເຄິ່ງໜຶ່ງຂອງເຂົາໃຫ້ກັບຄົນເຫລົ່ານັ້ນ. ແຕ່ກ່ອນເຂົາອາດລັກໂລບບໍ່ຍຸດຕິທຳຕໍ່ຄົນອື່ນ, ດຽວນີ້ເຂົາຂໍໃຊ້ແທນຄືນສີ່ເທົ່າ. ສິ່ງເຫລົ່ານີ້ສະແດງອອກເຖິງຄວາມຈິງໃຈ, ຄວາມປາດຖະໜາຢາກປ່ຽນແປງຊີວິດໃໝ່, ຢາກກັບມາສູ່ເສັ້ນທາງແຫ່ງຄວາມຊື່ກົງ, ເສັ້ນທາງແຫ່ງຄວາມຣອດ. ເພາະສະນັ້ນ, ພຣະເຢຊູເຈົ້າຈຶ່ງກ່າວວ່າ: “ວັນນີ້ຄວາມຣອດໄດ້ເຂົ້າມາສູ່ເຮືອນຫລັງນີ້ແລ້ວ. ດ້ວຍວ່າຜູ້ນີ້ກໍແມ່ນລູກຂອງອາບຣາຮາມ”. ໝາຍວ່າຊາເກວກໍແມ່ນລູກຂອງຄົນທີ່ເຊື່ອໃນພຣະເຈົ້າແລະເຂົາເອງກໍເຊື່ອໃນພຣະບຸດຂອງພຣະອົງ. ແລະຍ້ອນຄວາມເຊື່ອນີ້ເຂົາຈຶ່ງໄດ້ຮັບຄວາມຣອດ.

ພຣະເຢຊູເຈົ້າຈະກ່າວຄຳວ່າ: “ວັນນີ້” ອີກຄັ້ງໜຶ່ງກັບໂຈນຮ້າຍຜູ້ກັບໃຈບົນກາງເຂນວ່າ: “ວັນນີ້ເອງ, ເຈົ້າຈະຢູ່ໃນເມືອງສະຫວັນພ້ອມກັບເຮົາ”. (ລກ 23, 43).

ສິ່ງທີ່ກ່າວມາຂ້າງເທິງນີ້ຢາກສອນພວກເຮົາຫຍັງ? ສິ່ງທີ່ກ່າວມານີ້ຢາກສອນພວກເຮົາວ່າ ການກັບຈິດປ່ຽນໃຈ, ການຜັນປ່ຽນຊີວິດນັ້ນກ່ອນອື່ນໝົດແມ່ນພຣະຄຸນຈາກພຣະເຈົ້າ. ໝາຍວ່າຖ້າອາໄສແຕ່ຄວາມພະຍາຍາມຫລືພະກຳລັງຂອງພວກເຮົາເອງນັ້ນ ພວກເຮົາບໍ່ສາມາດຈະກັບມາຫາພຣະເຈົ້າໄດ້. ແຕ່ຖ້າມີພຣະອົງຢູ່ນຳແລ້ວທຸກສິ່ງເປັນໄປໄດ້.

ສິ່ງທີສອງທີ່ພວກເຮົາສາມາດຖອດຖອນຈາກວາຈາພຣະເຈົ້າວັນນີ້ຄື ການກັບຈິດປ່ຽນໃຈເພື່ອກັບໄປຫາພຣະເຢຊູເຈົ້າ, ອົງແຫ່ງຄວາມຣອດນັ້ນເປັນສິ່ງທີ່ຮີບດ່ວນຊຶ່ງພວກເຮົາຕ້ອງກະທຳດຽວນີ້, ວັນນີ້ເອງ. ເພາະ “ວັນນີ້ຄວາມຣອດໄດ້ເຂົ້າມາສູ່ພວກເຮົາແລ້ວ”. ເພາະ “ວັນນີ້ເອງ, ພວກເຮົາຈະຢູ່ໃນເມືອງສະຫວັນພ້ອມກັບພຣະເຢຊູເຈົ້າ”. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ